# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 14 ກັນຍາ 2008 (9-14-2008)

---

## <u>ມາເທື່ອລະຄົນ, ມາໝົດທຸກຄົນ</u>

### <u>ຂໍ້ພຣະຄັມພີໃນບົດຮຽນ</u> ມັດທາຍ 22: 1-14

### <u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ</u>

ການເຂົ້າໃຈພຣະປະສົງຂອງພຣະເຈົ້າທີ່ປາຖນາໃຫ້ມະນຸດເຂົ້າມາຣາຊອານາຈັກຂອງພຣະອົງ, ທ່ານສາມາດຮັບເອົາຄຳເຊື້ອເຊີນສຳລັບຕົນເອງແລະເຊື້ອເຊີນຄົນອື່ນໆໃຫ້ເຂົ້າໄປສູ່ຣາຊອານາຈັກນັ້ນ.

### <u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ</u>

ພຣະເຢຊູໄດ້ກ່າວເປັນຄຳອຸປມາເຣື່ອງກະສັດອົງນຶ່ງປະສົງຢາກໃຫ້ຄົນມາຮ່ວມໃນງານກິນດອງລູກຊາຍຂອງພຣະອົງ, ພຣະເຢຊູໄດ້ສິດສອນໂດຍໃຊ້ຄຳອຸປມາວ່າຫມົດທຸກຄົນໄດ້ຖືກເຊີນໃຫ້ເຂົ້າໃນຣາຊອານາຈັກສວັນ, ແຕ່ວ່າມີແຕ່ຜູ້ທີ່ປະຕິບັດຕາມກຳນົດກົດເກນຂອງພຣະອົງເທົ່ານັ້ນຈຶ່ງສາມາດເຂົ້າຜ່ານປະຕູໄດ້.

### <u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ</u>

ເມື່ອຖືກຖາມວ່າເປັນດ້ວຍເຫດໃດພຣະເຈົ້າຈຶ່ງຈະອະນຸຍາດໃຫ້ທ່ານເຂົ້າໄປໃນແຜ່ນດິນສວັນ? ຄົນສ່ວນຫລາຍຈະພຍາຍາມອະທິບາຍເຖິງຜົນສຳເຣັດສ່ວນຕົວຫລືກົດເກນທີ່ຄິດແລະເຊື່ອວ່າຕົນເອງດີພໍທີ່ຈະເຂົ້າໄປໄດ້. ອີກບາງພວກກໍບອກວ່າບໍ່ສົມຄວນມີສ່ວນກັບອານາຈັກສວັນເນື່ອງຈາກນິສັຍ, ການປະພຶດ, ຫລືປະສົບການບາງຢ່າງຂອງພວກເຂົາ. ຍັງມີຄຣິສຕຽນບາງຄົນສະແດງອາການສັບສົນກ່ຽວກັບເຣື່ອງທີ່ວ່າແມ່ນໃຜ ແລະດ້ວຍເຫດໃດພຣະເຈົ້າຈຶ່ງຈະໃຫ້ເຂົ້າໄປໃນແຜ່ນດິນສວັນ.

ພວກເຮົາສ່ວນຫລາຍໄດ້ຖືກເຊີນໃຫ້ໄປຮ່ວມງານດອງ, ພິທີຈົບການຮຽນ, ຫລືງານຄົບຮອບວັນແຕ່ງງານ. ຂ້າພະເຈົ້າພ້ອມດ້ວຍພັຣຍາໄດ້ຖືກເຊີນໃຫ້ໄປຮ່ວມພິທີຮັບຕຳແຫນ່ງທີ່ບ້ານພັກເຈົ້າແຂວງໃນເມືອງ ມັນກຳມາຣີ, ລັດອາລາບາມາ. ເຖິງແມ່ນວ່າຂ້າພະເຈົ້າບໍ່ໄດ້ປ່ອນບັດເລືອກເຈົ້າແຂວງຄົນນີ້ກໍຕາມ, ມັນກໍມີຄວາມຮູ້ສຶກວ່າເປັນກຽດຢ່າງຍິ່ງທີ່ໄດ້ພົບລາວເປັນການສ່ວນຕົວ. ແນວຄິດທີ່ຈະປະຕິເສດຄຳເຊີນນັ້ນ ແມ່ນບໍ່ມີໃນສມອງຂອງພວກຂ້າພະເຈົ້າ.

ຄຳເຊື້ອເຊີນຂອງພຣະເຈົ້າຍິ່ງສຳຄັນໄປກວ່າການໄປຢ້ຽມຢາມບ້ານພັກຂອງເຈົ້າແຂວງ. ພຣະອົງເຊີນພວກເຮົາທຸກໆຄົນໃຫ້ເຂົ້າມາຫາຣາຊອານາຈັກສວັນ. ມີແຕ່ພວກທີ່ເຮັດຕາມກົດບັດເຊີນຂອງພຣະອົງເທົ່ານັ້ນຈຶ່ງຈະໄດ້ເຂົ້າໄປ. ໃນບົດຮຽນນີ້ ພວກເຮົາຈະຄົ້ນຄ້ວາສິ່ງສຳຄັນຂອງການເຮັດຕາມກົດໃນບັດເຊີນຂອງພຣະເຈົ້າໃນການທີ່ຈະເຂົ້າໄປໃນອານາຈັກຂອງພຣະອົງແລະເຊີນຄົນອື່ນໆໃຫ້ມາກັບພວກເຮົາ.

## <u>ສຶກສາພຣະຄັມພີ</u>

### 1. <u>ບັດເຊີນໄດ້ສົ່ງອອກໄປແລ້ວ</u> (ມັດທາຍ 22:1-7)

ໃນສມັຍທີ່ພຣະເຢຊູຍັງເປັນມະນຸດຢູ່ນັ້ນ, ການສລອງງານດອງແມ່ນເຫດການສຳຄັນຫຼາຍ. ຍາດຕິພີ່ນ້ອງແລະເພື່ອນຝູງກໍຫວັງຈະໄດ້ຮັບບັດເຊີນ. ຖ້າປະຕິເສດຕໍ່ຄຳເຊີນໃຫ້ເຂົ້າຮ່ວມງານດອງ ເປັນພິເສດແມ່ນຂອງກະສັດແມ່ນບໍ່ເຄີຍໄດ້ຍິນຈັກເທື່ອ. ງານລ້ຽງແມ່ນໂອກາດກິນແລະດື່ມ, ຕາມປົກກະຕິແລ້ວມັນຈະໃຊ້ເວລາຫມົດທັງມື້, ລວມທັງການກິນອາຫານຢ່າງຫລວງຫລາຍແລະສເລີມສລອງຢ່າງໃຫຍ່. ພຣະເຢຊູສົມທຽບ **ອານາຈັກສວັນ**ໃສ່ກັບ**ກະສັດອົງນຶ່ງຊຶ່ງຈັດງານດອງສຳລັບລູກຊາຍຂອງພຣະອົງ**. ກະສັດໄດ້ສົ່ງ**ຂ້າໃຊ້ຫລາຍຄົນ** ໃຫ້ໄປບອກພວກທີ່ຖືກເຊີນໃຫ້ມາໃນງານລ້ຽງທີ່ເຖິງເວລາແລ້ວ. ຂ້າໃຊ້ທັງຫລາຍໃນຄຳອຸປມາເລັງເຖິງພວກຜູ້ປະກາດພຣະທັມແລະຜູ້ນຳທີ່ພຣະເຈົ້າໄດ້ສົ່ງມາເຊີນໄພ່ພົນຂອງພຣະອົງໃຫ້ໄປຮ່ວມໃນຣາຊອານາຈັກຂອງພຣະອົງໃນຫລາຍໆສັດຕະວັດລ່ວງຫນ້າ.

ຄວາມຄິດທີ່ປະຕິເສດຕໍ່ຄຳເຊີນຂອງກະສັດທີ່ໃຫ້ໄປຮ່ວມງານດອງລູກຊາຍຂອງພຣະອົງ ເບິ່ງເໝືອນວ່າມັນໂພດເກີນໄປ- ແລະເບິ່ງຄືວ່າມັນຄົງນຳຄວາມສົນໃຈໃຫ້ແກ່ຜູ້ທີ່ຟັງພຣະເຢຊູ. ໃນຄຳອຸປະມາ, **ຂ້າໃຊ້ອີກກຸ່ມນຶ່ງ**ໄດ້ຖືກສົ່ງອອກໄປຫາພວກທີ່ຖືກເຊີນດ້ວຍຄຳສັ່ງສະເພາະເຈາະຈົງກ່ຽວກັບການຕຽມຕົວຢ່າງໃດແລະຖວາຍຫຍັງແດ່. ປານນັ້ນພວກທີ່ຖືກເຊີນ**ຍັງບໍ່ຟັງ**ແລະໜີໄປທາງອື່ນ, ຄົນນຶ່ງກໍໄປນາຂອງຕົນແລະອີກຄົນນຶ່ງກໍກັບໄປຫາທຸຣະກິດຂອງລາວ. ແຂກຮັບເຊີນບາງຄົນກໍຂົ່ມເຫັງຂ້າໃຊ້ແລະຂ້າພວກເຂົາຖິ້ມ. ເມື່ອກະສັດອົງນັ້ນຮູ້ເຣື່ອງກ່ຽວກັບການທີ່ພວກເຂົາກະທຳຕໍ່ຂ້າໃຊ້ຂອງພຣະອົງລວມທັງການບໍ່ຢາກຮັບຄຳເຊີນໃຫ້ມາຮ່ວມໃນງານລ້ຽງທີ່ພຣະອົງຈັດຕຽມ, ເພິ່ນກໍໂກດເຄືອງໃຈ. ພວກທີ່ປະຕິເສດຕໍຄຳເຊີນແລະພວກທີ່ຂົ່ມເຫັງຂ້າໃຊ້ຂອງພຣະອົງຈະຕ້ອງໄດ້ຮັບໂທດ.

ພວກຜູ້ນຳຊາວຢິວແລະຄົນທັງຫລາຍຮູ້ສຶກກິນແໜງໃນການປະຕິເສດແລະຂົ່ມເຫັງຜູ້ປະກາດພຣະທັມຂອງພຣະເຈົ້າ. ພຣະເຢຊູຊີ້ໃຫ້ເຫັນຈຸດນີ້ທີ່ພຣະອົງປະກາດວ່າພວກຟາຣີຊາຍແມ່ນລູກຫລານຂອງພວກທີ່ຂ້າຜູ້ປະກາດພຣະທັມແລະພວກເຂົາເອງກໍຈະຂ້າພວກທີ່ພຣະເຢຊູຈະສົ່ງມາຫາພວກເຂົາ(ມັດທາຍ 23:29-36). ຄືກັນກັບກະສັດອົງນັ້ນແຫລະ, ພຣະເຈົ້າຍັງອົດທົນແລະຍັງເຊີນຍໍ້າໄພ່ພົນຂອງພຣະອົງອີກໃຫ້ມີສ່ວນໃນອານາຈັກຂອງພຣະອົງ. ແຜນການຂອງພຣະເຈົ້າໃນການໄຖ່ບາບແມ່ນໄດ້ວາງແຜນການຢ່າງນີ້ມນອນ ແລະປະສົບຜົນສຳເຣັດດ້ວຍການຈັດຕຽມຢ່າງຍິ່ງໃຫຍ່ແລະໄດ້ເສັຍສະລະສິ່ງທີ່ແພງທີ່ສຸດ. ແມ້ກະທັ້ງຫລັງຈາກການທໍຣະມານຢ່າງທາລຸນແລະການຖືກປະຫານທີ່ພຣະອົງໄດ້ຮັບຈາກພວກຟາຣີຊາຍແລະຜູ້ນຳສາສນາຄົນອື່ນໆ, ພຣະເຢຊູຍັງໄດ້ສົ່ງສາວົກຂອງພຣະອົງແລະພວກທີ່ເຊື່ອໃນພຣະອົງໃຫ້ໄປປະກາດຕາມຖນົນຫົນທາງ ເຖິງຄຳເຊື້ອເຊີນຂອງພຣະເຈົ້າໃຫ້ເຂົ້າມາໃນຣາຊອານາຈັກສວັນ. ພວກທີ່ມີຄວາມເຊື່ອຫລາຍຄົນໃນຕອນເລີ້ມຕົ້ນນັ້ນ ໄດ້ເສັຽຊີວິດຂອງພວກເຂົາໃນການປ່າວປະກາດຂ່າວປະເສີດເຣື່ອງຄວາມລອດພົ້ນບາບ.

ໃນສມັຍນີ້, ພຣະເຈົ້າຍັງອົດທົນແລະຍັງສືບຕໍ່ເຊີນຍໍ້າມະນຸດທັງປວງໃຫ້ມາຫາພຣະອົງ. ເຖິງປານນັ້ນ, ຄົນສ່ວນຫລາຍຍັງປະຕິເສດຫລືເມີນເສີຍຄຳເຊີນໃຫ້ມາເຖິງຄວາມລອດພົ້ນໂດຍຜ່ານທາງພຣະບຸດຂອງພຣະເຈົ້າ ຄືພຣະເຢຊູຄຣິດເຈົ້າ. ພວກເຂົາດູຖູກພຣະເຈົ້າ, ພຣະບຸດຂອງພຣະອົງ, ແລະຕໍ່ຄຳເຊື້ອເຊີນນັ້ນ. ພວກເຂົາຄວນຈະຮູ້ວ່າການຫລີກໜີຈາກຄຳເຊີນຂອງພຣະເຈົ້ານຳເຂົາໄປສູ່ການພິພາກສາດັ່ງທີ່ພົບໃນຄຳອຸປມານັ້ນ. ໃນຖານະເປັນຜູ້ທີ່ມີຄວາມເຊື່ອ, ພວກເຮົາຄວນຈະເຕັມລົ້ນດ້ວຍຄວາມຮັກແລະຮູ້ເຖິງບຸນຄຸນຕໍ່ພຣະຜູ້ເປັນເຈົ້າທີ່ໄດ້ເຊີນພວກເຮົາໃຫ້ມີສ່ວນກັບພຣະອົງໃນການສເລີມສລອງອັນຕລອດໄປເປັນນິດຂອງການໄຖ່ບາບທີ່ພຣະອົງໄດ້ກະທຳ ແລະຈະຢູ່ກັບພຣະອົງເປັນພາກສ່ວນໃນຄອບຄົວຂອງພຣະອົງ.

## 2. <u>**ໄປຊອກຫາຜູ້ມາຮ່ວມງານລ້ຽງ**</u> (ມັດທາຍ 22: 8-10)

ໃນຄຳອຸປມາ, ອີກເທື່ອນຶ່ງກະສັດໄດ້ສົ່ງຂ້າໃຊ້ອອກໄປເຊີນທຸກໆຄົນຜູ້ທີ່ຢາກຕອບຄຳເຊີນ. ຂ້າໃຊ້ເຫລົ່ານັ້ນນຳ**ທຸກໆຄົນທີ່ພວກເຂົາພົບມາ**, **ທັງຄົນຊົ່ວຮ້າຍແລະຄົນດີ**ຈົນຫ້ອງງານກິນລ້ຽງນັ້ນ**ເຕັມໄປດ້ວຍແຂກ**. ຄຳວ່າດີແລະຊົ່ວຮ້າຍໃນທີ່ນີ້ບາງທີອາດຈະເລັງໃສ່ຄົນຢິວແລະຄົນຕ່າງຊາດແລະກໍອາດຈະກ່າວເຖິງຄົນຊອບທັມແລະຄົນອະທັມ. ຄຳເຊີນຂອງກະສັດແມ່ນໄປເຖິງທຸກໆຄົນຜູ້ທີ່ຢາກມາຮ່ວມໃນງານກິນດອງ. ພວກທີ່ຖືກເຊີນເທື່ອກ່ອນນັ້ນເບິ່ງເໝືອນວ່າ**ບໍ່ສົມ**ກັບງານລ້ຽງເພາະການປະພຶດຂອງພວກເຂົາ: ພວກເຂົາປະຕິເສດຄຳເຊີນຂອງກະສັດ. ຄຳເຊີນຂອງກະສັດຄັ້ງນີ້ແມ່ນເປີດກວ້າງໄປເຖິງທຸກໆຄົນ.

ຕາມປວັດສາດຜ່ານມາ, ການປະກາດຂ່າວປະເສີດໄດ້ຍ້າຍຈາກກຸງເຢຣູຊາເລັມແລະຢູດາ (ຊາວຢິວ),ໄປຫາຊາມາເຣັຽ(ຊາວຢິວ/ຊາວຕ່າງຊາດປະປົນກັນ), ແລະທົ່ວຂົງເຂດຂອງພວກ(ຄົນຕ່າງຊາດ). ໂດຍຜ່ານການປະຕິເສດແລະການກົດຂີ່ຂົ່ມເຫັງ, ຄຣິສຕະຈັກໃນສມັຍເລີ້ມຕົ້ນໄດ້ແຕກກະຈັດກະຈາຍແລະ ໄດ້ແບ່ງປັນຂ່າວປະເສີດກັບທຸກໆຄົນ(ກິຈການ 8:1-4). ໃນຕອນທ້າຍການຮັບໃຊ້ພຣະເຈົ້າຂອງໂປໂລ, ພວກທີ່ເຊື່ອທັງຫລາຍມາຈາກຫລາຍໆ ປະເທດ, ຫລາຍເຊື້ອຊາດ, ແລະເບື້ອງຫລັງທີ່ຕ່າງກັນມາຮ່ວມນະມັສການຕາມຄຣິສຕະຈັກໃນເຂດເອີຣົບ, ອາຊີ, ແລະອັຟຣິກາ.

ຄຳເຊີນຂອງພຣະເຈົ້າໃຫ້ເຖິງຄວາມພົ້ນບໍ່ເຄີຍຂຶ້ນກັບຜົນບຸນຫລືຄວາມສຳເຣັດຜົນ, ແຕ່ວ່າໄດ້ສົ່ງເຖິງຜູ້ຊົ່ວຮ້າຍທີ່ສຸດແລະພວກທີ່ເຕີບໂຕໃນໂບດເຫມືອນກັນ. ພວກເຮົາໄດ້ພົ້ນໂດຍພຣະຄຸນທາງຄວາມເຊື່ອໃນພຣະຄຣິດ-ບໍ່ແມ່ນດ້ວຍເຫດຜົນອື່ນອີກ. ພວກເຮົາບໍ່ມີຂໍ້ແມ້ພິເສດອັນໃດຫລືສິດອັນໃດທີ່ອະນຸຍາດໃຫ້ພວກເຮົາຮັບຄຳເຊີນເພື່ອເຮົາຕ້ອງໄດ້ພົ້ນ. ພຣະຄຸນຂອງພຣະເຈົ້າໄດ້ສະແດງເຖິງຄວາມພະຍາຍາມຂອງພຣະອົງທີ່ຈະນຳຄົນໃຫ້ມາເຖິງຣາຊອານາຈັກໃຫ້ຫລາຍເທົ່າທີ່ຈະຫລາຍໄດ້ສຳລັບຜູ້ທີ່ໄດ້ຍິນແລະຕອບຮັບຄຳເຊື້ອເຊີນຂອງພຣະອົງ.

ພຣະເຈົ້າບໍ່ໄດ້ວາງຂອບເຂດຈຳກັດວ່າຜູ້ໃດຄວນຖືກເຊີນ. ພວກເຮົາກໍເຊັ່ນກັນບໍ່ຄວນຄັດເລືອກວ່າຜູ້ໃດທີ່ພວກເຮົາຕ້ອງແບ່ງປັນເຣື່ອງພຣະຄຣິດ. ພວກເຮົາຄວນເຊີນທຸກໆຄົນທີ່ພວກເຮົາພົບພໍ້ໃນການມີສ່ວນໃນຣາຊອານາຈັກຂອງພຣະເຈົ້າ. ໃນຖານະເປັນຜູ້ທີ່ເຊື່ອ, ພວກເຮົາເປັນ**ຂ້າໃຊ້**ຂອງພຣະຄຣິດ, ແລະຫນ້າທີ່ຕົ້ນຕໍຂອງພວກເຮົາຄືໃຫ້ຄ້າຍຄືກັບພຣະຄຣິດແລະເຊີນຄົນອື່ນໆໃຫ້ມາຮ່ວມໃນຣາຊອານາຈັກ.

## 3. <u>**ໂທດກັມນຳທັນ**</u> (ມັດທາຍ 22:11-14)

ໃນສມັຍພຣະຄັມພີ, ເຈົ້າພາບງານດອງບາງຄົນ, ເປັນພິເສດຜູ້ທີ່ມີຖານະດີຄືກະສັດ, ຕ້ອງແຈກເຄື່ອງນຸ່ງໃຫ້ແຂກສຳລັບນຸ່ງໃນງານລ້ຽງ. ຫລັງຈາກເສັດພິທີແຕ່ງງານແຂກທັງຫມົດກໍເຕົ້າໂຮມກັນຢູ່, ກະສັດໄດ້ມາພົບຊາຍຜູ້ນຶ່ງ**ບໍ່ນຸ່ງເຄື່ອງສຳລັບງານ**. ຊາຍຜູ້ນັ້ນ**ປາກບໍ່ອອກ**ແລະກໍຫາຂໍ້ແກ້ຕົວບໍ່ໄດ້. ການຕໍ່ວ່າຂອງກະສັດກັບຊາຍຜູ້ນັ້ນຍັງຢູ່ໃນຂັ້ນດີ (ຄືຮ້ອງຊາຍຜູ້ນັ້ນວ່າ"ສະຫາຍ") ແລະປະນາມການທີ່ຊາຍຜູ້ນັ້ນບໍ່ນຸ່ງເຄື່ອງສຳລັບງານທັ້ງໆທີ່ມີໂອກາດນຸ່ງເຄື່ອງໃຫ້ຖືກຕ້ອງ, ແຕ່ວ່າລາວບໍ່ໄດ້ເຮັດ. ຜູ້ແປພຣະຄຳບາງຄົນເຊື່ອວ່າຄຳເວົ້າໃນຂໍ້ 11-12 ເພີ່ມຫລັກຖານໃຫ້ເຫັນວ່າການນຸ່ງເຄື່ອງບໍ່ເຫມາະສົມນັ້ນເປັນການເລືອກຂອງລາວເອງ.

ກະສັດໄດ້ກ່າວຕໍ່ພວກແຂກທັງຫລາຍວ່າ "ຈົ່ງມັດຕີນມັດມືຄົນນີ້ເອົາໄປຖິ້ມເສັຽບ່ອນມືດພາຍນອກທີ່ນັ້ນມີການຮ້ອງໄຫ້ແລະຂົບແຂ້ວຢູ່." ເບິ່ງເຫມືອນວ່າການຕັດສິນຂ້ອນຂ້າງຫນັກສຳລັບພວກເຮົາ, ພວກເຮົາຕ້ອງສົມທຽບໃສ່ກັບຄວາມຕັ້ງໃຈຂອງກະສັດແລະລະບຽບຂອງການເຂົ້າຮ່ວມງານດອງຂອງສມັຍນັ້ນ. ຊາຍຜູ້ນັ້ນເຂົ້າຮ່ວມງານໂດຍເຮັດຕາມໃຈຊອບຂອງລາວເອງແທນທີ່ຈະເຮັດຕາມເງື່ອນໄຂທີ່ກະສັດກຳນົດໃຫ້ອັນເປັນຜົນໃຫ້ເຖິງແກ່ການພິພາກສາ-ການທຳທ່າເມີນເສີຍຫລືປະຕິເສດຄຳເຊື້ອເຊີນຂອງກະສັດນັ້ນຈຶ່ງເປັນ ຜົນໃຫ້ຕົກໃນການພິພາກສາລົງໂທດ.

ໃນສມັຍນີ້, ມີບາງຄົນທີ່ຢູ່ໃນໂບດແລະປາກົດຄືວ່າຢູ່ໃນຣາຊອານາຈັກຂອງພຣະເຈົ້າ, ແຕ່ວ່າພວກເຂົາບໍ່ໄດ້ພົ້ນເພາະວ່າພວກເຂົາບໍໄດ້ເອົາເສື້ອຜ້າແຫ່ງຄວາມຊອບທັມຂອງພຣະຄຣິດມານຸ່ງຫົ່ມ. ພວກເຂົາຍັງພຍາຍາມນຸ່ງຫົ່ມຄວາມດີ, ການກະທຳ, ຫລືຄວາມພຍາຍາມຂອງພວກເຂົາເອງ(ເອຊາຢາ 64:6; ເອເຟ ໂຊ 2:8-9). ບາງທີພວກເຂົາກໍກາງຕໍ່ສາສນາຂອງພວກເຂົາເອງ. ບາງຄົນກໍເວົ້າວ່າຢ່າງນີ້ "ຈະເຊື່ອອັນໃດກໍບໍ່ເປັນຫຍັງດອກ, ຂໍພຽງແຕ່ໃຫ້ຈິງໃຈ." ພວກເຂົາຄິດວ່າຍັງມີທາງອື່ນອີກທີ່ຈະນຳໄປສູ່ສວັນໄດ້ ບໍ່ແມ່ນແຕ່ໂດຍທາງຄວາມເຊື່ອໃນພຣະເຢຊູຄຣິດທ່ນັ້ນ.

ຖ້າວ່າໃຜຜູ້ນຶ່ງພຍາຍາມຈະເຂົ້າໃນຣາຊອານາຈັກຂອງພຣະເຈົ້າ ນອກເຫນືອຈາກການຜ່ານຄວາມຊອບທັມຂອງພຣະຄຣິດ(ເຄື່ອງນຸ່ງອັນນິຣັນດອນທີ່ພຣະເຈົ້າຍອມຮັບຮູ້ເທົ່ານັ້ນ), ຄົນຜູ້ນັ້ນກໍຈະພົບວ່າປາກບໍ່ອອກ, ປ້ອງກັນຕົວບໍ່ໄດ້ຕໍ່ພຣະພັກພຣະເຈົ້າ. ໂດຍຜ່ານທາງພຣະຄຣິດ, ທຸກສິ່ງຢ່າງສຳເຣັດແລ້ວ; ເປັນເສື້ອຄຸມທີ່ເຫມາະສົມທີ່ຖືກມອບໃຫ້. ສິ່ງທັງຫມົດເຫລົ່ານີ້ແມ່ນສຳລັບຜູ້ທີ່ຍອມຮັບຄຳເຊື້ອເຊີນຂອງພຣະເຈົ້າໃຫ້ເຂົ້າສູ່ອານາຈັກໂດຍຄວາມເຊື່ອໃນພຣະຄຣິດເທົ່ານັ້ນ.

ພຣະເຢຊູມ້ວນທ້າຍຂອງຄຳອຸປມາດ້ວຍຂໍ້ຄວາມທີ່ສລຸບກ່ຽວກັບຄຳເຊື້ອເຊີນຂອງພຣະເຈົ້າຕໍ່ຜູ້ທີ່ຈະເຂົ້າແຜ່ນດິນຂອງພຣະອົງ. ເຫມືອນດັ່ງກະສັດໃນຄຳອຸປມາໄດ້ເຊີນຫລາຍໆຄົນໃຫ້ມາໃນງານກິນດອງລູກຊາຍຕົນ, ພຣະເຈົ້າກໍໄດ້ເຊີນຫລາຍໆຄົນໃຫ້ເຂົ້າໃນແຜ່ນດິນຂອງພຣະອົງໂດຍຜ່ານການປະກາດຂ່າວປະເສີດ. ຄຳວ່າຫລາຍແມ່ນການເວົ້າຂອງຊາວຢິວທີ່ພວກເຮົາສາມາດເຂົ້າໃຈໃນພາສາອັງກິດວ່າທັງຫມົດແລະ ທຸກໆຄົນ. ຄຳວ່າໜ້ອຍແມ່ນຈຳນວນທີ່ສົມທຽບກັບຄົນໃນຈຳນວນຫລາຍທີ່ຖືກເຊີນແລະມີຈຳນວນນ້ອຍທີ່ ໂຕ້ຕອບໂດຍທາງຄວາມເຊື່ອ.

ພວກເຮົາຕ້ອງຮັບຮູ້ວ່າຄຳອຸປມາ, ງານສລອງພິທີສົມຣົດ, ການເຊື້ອເຊີນ, ແລະຄຳແນະນຳຕ່າງໆ ທີ່ກ່ຽວກັບຄຳເຊີນແມ່ນເລີ້ມຕົ້ນອອກມາຈາກກະສັດ. ເຖິງປານນັ້ນ, ການຮັບຜິດຊອບຂອງຜູ້ທີ່ຖືກເຊີນແມ່ນຕ້ອງໄດ້ມາແລະມາຕາມກຳນົດເວລາຂອງກະສັດ. ໃນວຽກງານແຫ່ງຄວາມລອດພົ້ນ, ຣິດທານຸພາບຂອງ ພຣະເຈົ້າແມ່ນທຳງານໃນທຸກໆມຸມຂອງຜູ້ທີ່ມາຫາພຣະຄຣິດ, ແຕ່ວ່າບໍ່ໄດ້ປົດປ່ອຍທຸກໆຄົນຈາກການຮັບຜິດຊອບຂອງມະນຸດໃນການເລືອກຂອງພວກເຂົາວ່າຈະຮັບຫລືປະຕິເສດຕໍ່ພຣະປະສົງຂອງພຣະເຈົ້າ. ເມື່ອພວກເຮົາໂຕ້ຕອບຕາມຫລັກການຂອງພຣະເຈົ້າເທົ່ານັ້ນ-ເຊື່ອໃນພຣະບຸດຂອງພຣະອົງ, ພຣະເຢຊູຄຣິດ-ຄືພວກເຮົາສະແດງອອກໃຫ້ເຫັນວ່າພວກເຮົານຸ່ງເຄື່ອງທີ່ເໝາະສົມ, ບອກພຣະເຈົ້າວ່າໂດຍຂ້ານ້ອຍ.

## ບົດຮຽນຊີວິດ

ການເຊື້ອເຊີນຂອງພຣະເຈົ້າສຳລັບຊີວິດອັນຕລອດໄປເປັນນິດແມ່ນສຳລັບທຸກໆຄົນແລະຄຳສັ່ງໃຫ້ເຮັດຕາມຢ່າງຖືກຕ້ອງ-ໃນການເຊື່ອໃນພຣະເຢຊູຄຣິດໃຫ້ເປັນພຣະຜູ້ເປັນເຈົ້າແລະເປັນພຣະຜູ້ຊ່ວຍໃຫ້ພົ້ນສ່ວນຕົວ, ໄວ້ວາງໃຈໃນພຣະອົງແລະພຣະອົງເທົ່ານັ້ນສຳລັບຄວາມລອດພົ້ນບາບ. ການພຍາຍາມທີ່ຈະເຂົ້າແຜ່ນດິນສວັນທາງອື່ນຄືໂດຍການເຮັດດີຕ່າງໆຂອງພວກເຮົາເອງຫລືຄວາມສຳເຣັດຜົນຫລາຍແນວເປັນເຫດໃຫ້ຖືກການປະຕິເສດຈາກພຣະເຈົ້າ. ບາງຄົນກໍອາດຈະມີຄວາມຮູ້ສຶກວ່າຕົນເອງບໍ່ສົມຄວນຈະໄດ້ຮັບຄວາມລອດພົ້ນໄດ້. ເຖິງປານນັ້ນພຣະເຈົ້າຍັງເຊີນທຸກໆຄົນໃຫ້ເຂົ້າມາຣາຊອານາຈັກຂອງພຣະອົງຖ້າຜູ້ນັ້ນຫາກຍອມກັບໃຈ ລະຖິ້ມຄວາມຜິດບາບຂອງເຂົາແລະວາງໃຈເຊື່ອໃນພຣະຄຣິດສຳລັບຄວາມລອດພົ້ນ. ໃນຖານະທີ່ເປັນຜູ້ເຊື່ອ, ພວກເຮົາຄວນຊອກຫາທາງທີ່ຈະເຊີນທຸກໆ ຄົນໃຫ້ເຂົ້າໄປໃນແຜ່ນດິນຂອງພຣະເຈົ້າໂດຍການ ແບ່ງປັນຂ່າວປະເສີດຂອງພວກເຮົາກັບເຂົາເຈົ້າ.

ພວກເຮົາຄວນຈະໂຕ້ຕອບຕໍ່ການເຊີນຂອງພຣະເຈົ້າໃຫ້ເຂົ້າສູ່ອານາຈັກຂອງພຣະອົງຢ່າງໃດ?

- ໃຫ້ແນ່ນອນວ່າພວກເຮົາຮັບເອົາຄຳເຊື້ອເຊີນຂອງພຣະເຈົ້າໃນກຳນົດຂອງພຣະອົງ.
- ໃຫ້ແນ່ນອນວ່າຈະບໍ່ຍົກເວັ້ນຜູ້ໃດຜູ້ນຶ່ງຈາກຄຳເຊີນຂອງພຣະເຈົ້າເພື່ອເຂົາຈະມາຫາພຣະອົງ.
- ໃຫ້ພວກເຮົາແນ່ນອນວ່າຈະບໍ່ພຍາຍາມເຮັດທາງອື່ນອີກນອກຈາກກຳນົດກົດເກນຂອງພຣະເຈົ້າສຳລັບຄວາມລອດພົ້ນບາບແລະການດຳຣົງຊີວິດຄຣິສຕຽນ.
- ຂອບພຣະຄຸນພຣະຜູ້ເປັນເຈົ້າສຳລັບການກະທຳຂອງພຣະອົງກ່ຽວກັບຄວາມລອດພົ້ນບາບ, ການທີ່ພຣະອົງເຊີນພວກເຮົາ, ແລະການເຊີນຂອງພຣະອົງຕໍ່ຄົນອື່ນໆ.
- ອອກໄປບອກຄົນອື່ນທີ່ຢູ່ອ້ອມຮອບພວກເຮົາເຖິງເຣື່ອງພຣະເຢຊູໃນຖານະເປັນຂ້າໃຊ້ຂອງພຣະອົງຜູ້ນຶ່ງ.

ປ້າໃຫຍ່ຂອງຂ້າພະເຈົ້າເປັນເພື່ອນກັບ ລີລຽນ ຄາຣ໌ເຕີ ຊຶ່ງເປັນແມ່ຂອງອະດີດປະທານາທິບໍດີ ຈິມມີ ຄາຣ໌ເຕີ, ເມື່ອປະທານາທິບໍດີ ຄາຣ໌ເຕີ ໄດ້ຖືກເລືອກໃນປີ 1976, ປ້າໄດ້ຮັບບັດເຊີນໃຫ້ໄປຮ່ວມພິທີເປີດຮັບຕຳແໜ່ງ, ແລະເພິ່ນກໍໃສ່ຂອບແລ້ວກໍຫ້ອຍໄວ້ທີ່ຝາເຮືອນ. ເມື່ອຂ້າພະເຈົ້າຖາມວ່າປ້າກໍໄດ້ໄປຮ່ວມງານນັ້ນບໍ່? ເພິ່ນກໍຕອບແບບງ່າຍໆວ່າ "ບໍ່." ຂ້າພະເຈົ້າກໍບໍ່ຫນ້າເຊື່ອເຫມືອນກັນ. ຄວາມຄິດທຳອິດທີ່ແລ່ນເຂົ້າຫົວຂ້າພະເຈົ້າກໍຄື,"ຂ້ອຍປາຖນາຢາກຖືກເຊີນ; ຂ້ອຍຈະໄປຮ່ວມແນ່ນອນ." ຢ່າເມີນເສີຍຫລືປະຕິເສດຄຳເຊີນຂອງພຣະເຈົ້າທີ່ໃຫ້ເຂົ້າໄປໃນຣາຊອານາຈັກຂອງພຣະອົງ; ຮັບເອົາພຣະຄຣິດໂດຍທາງຄວາມເຊື່ອ. ຕໍ່ຈາກນັ້ນກໍຮ່ວມກັບພຣະອົງໃນພິທີສລອງການແຕ່ງງານຂອງພຣະເມສານ້ອຍ(ພຣະນິມິດ 19:9), ນຳເອົາຫລາຍໆຄົນໄປນຳຕາມຄວາມສາມາດຂອງທ່ານ ແລະບອກພວກເຂົາເຖິງຄຳເຊີນໃຫ້ເຖິງຄວາມລອດພົ້ນທີ່ມາຈາກພຣະຄຸນຂອງພຣະເຈົ້າ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org., by PA